ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ແຂວງຫຼວງນໍ້າທາ

ເຈົ້າແຂວງ

ເລກທີ..02.../ຈຂ

ຫຼວງນໍ້າທາ, ວັນທີ..26 ກໍລະກົດ 2016

# ຄໍາສັ່ງ

## ວ່າດ້ວຍການສະກັດກັ້ນກຸ່ມຄົນບໍ່ດີ ທີ່ລັກເອົາອຸປະກອນສາຍສົ່ງໄຟຟ້າແຮງສູງ ແລະ ຫ້າມປູກຕົ້ນໄມ້, ສິ່ງປຸກສ້າງຕ່າງໆ ຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ໃນຂອບເຂດແຂວງຫຼວງນໍ້າທາ.

**ເຖິງ:** ພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ, ລັດວິສາຫະກິດ, ບໍລິສັດ, ໂຮງຈັກ, ໂຮງງານ, ຫ້າງຮ້ານ ແລະ ບັນດາເມືອງພາຍໃນແຂວງຫຼວງນໍ້າທາ.

- **ອີງຕາມ:** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21/10/2003.
- **ອີງຕາມ:** ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ 03/ສພຊ, ລົງວັນທີ 20/12/2011.
- **ອີງຕາມ:** ແຈ້ງການຂອງລັດວິສາຫະກິດໄຟຟ້າລາວ ສະບັບເລກທີ 3894/ຟຟລ, ລົງວັນທີ 9/10/2015 ວ່າດ້ວຍການຫ້າມປູກຕົ້ນໄມ້ ແລະ ສິ່ງປຸກສ້າງອື່ນໆ ຢູ່ກ້ອງສາຍສົ່ງໄຟຟ້າແຮງສູງ.
- **ອີງຕາມ:** ໜັງສືສະເໜີຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ ສະບັບເລກທີ 300/ພບ.ນທ, ລົງວັນທີ 29/6/2016.

ໃນໄລຍະຜ່ານມາ ໄດ້ມີກຸ່ມຄົນບໍ່ດີຈໍານວນໜຶ່ງ ໄດ້ລັກເອົາສິ້ນສ່ວນອຸປະກອນເຫຼັກສານເສົາໄຟຟ້າແຮງສູງ ເຊິ່ງເປັນຊັບສິນຂອງຊາດ, ຖືກເສຍຫາຍເປັນຈໍານວນຫຼວງຫຼາຍ ເຮັດໃຫ້ສູນເສຍງົບປະມານໃນການສ້ອມແປງ, ບໍາລຸງຮັກສາເປັນຈໍານວນບໍ່ໜ້ອຍ ແລະ ບາງຂົງເຂດຍັງມີຕົ້ນໄມ້ອຸດສາຫະກໍາທີ່ໃຫຍ່, ສິ່ງປຸກສ້າງ ທີ່ຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ, ເຊິ່ງກໍ່ໃຫ້ເກີດໄຟຕົກ, ໄຟມອດ ແລະ ຂັດກັບເຕັກນິກຂອງໄຟຟ້າລາວ; ເພື່ອສະກັດກັ້ນກຸ່ມຄົນທີ່ບໍ່ດີ ແລະ ບັນຫາຕ່າງໆທີ່ອາດຈະເກີດຂຶ້ນໃຫ້ທັນການ.

## ເຈົ້າແຂວງໆຫຼວງນໍ້າທາ ອອກຄໍາສັ່ງ ດັ່ງນີ້:

1. ໃຫ້ພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ, ລັດວິສາຫະກິດ, ບັນດາເມືອງ, ກຸ່ມບ້ານ ແລະ ບ້ານພາຍໃນແຂວງຫຼວງນໍ້າທາ ປະສານສົມທົບຮ່ວມມືກັນ ໃນການຕິດຕາມບຸກຄົນ, ກຸ່ມຄົນທີ່ບໍ່ດີ ລັກເອົາອຸປະກອນເຫຼັກສານສາຍເສົາໄຟຟ້າແຮງສູງ, ສາຍຈໍາໜ່າຍໄຟຟ້າຕາມຈຸດຕ່າງໆ ແລະ ບັນດາຮ້ານເກັບຊື້ເຫຼັກເສດຕະຫຼອດຮອດບຸກຄົນທີ່ມີອຸປະກອນໄຟຟ້າມາຄອບຄອງ, ຖ້າຫາກພົບເຫັນແມ່ນໃຫ້ລາຍງານເຈົ້າໜ້າທີ່ ຫຼື ອໍານາດການປົກຄອງບ້ານ ສົມທົບກັບເຈົ້າໜ້າທີ່ໄຟຟ້າໃນແຕ່ລະຂົງເຂດ ເພື່ອກວດກາ, ກັກຕົວຜູ້ກ່ຽວມາດໍາເນີນຄະດີຕາມລະບຽບກົດໝາຍ.

2. ໃຫ້ທ່ານເຈົ້າເມືອງ 5 ເມືອງ ອອກແຈ້ງການໃຫ້ແຕ່ລະກຸ່ມບ້ານ, ບ້ານ, ກົມກອງ ແລະ ຫ້ອງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຊາບ.

2.1. ໃຫ້ແຕ່ງຕັ້ງຄະນະກຳມະການຄຸ້ມຄອງຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ ທີ່ມີສາຍສົ່ງໄຟຟ້າແຮງສູງ, ສາຍຈຳໜ່າຍໄຟຟ້າຜ່ານ, ໂດຍປະກອບມີພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ບ້ານເປັນເຈົ້າການ ໃນການຕິດຕາມ, ກວດກາເປົ້າໝາຍກຸ່ມຄົນທີ່ບໍ່ດີ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອລາຍງານໃຫ້ຄະນະກຳມະການເພື່ອຄຸ້ມຄອງ, ກວດກາ, ແກ້ໄຂສະພາບສາຍສົ່ງໄຟຟ້າແຮງສູງຂັ້ນແຂວງ ຮັບຊາບໃຫ້ທັນເວລາ.

2.2. ໃຫ້ກຸ່ມບ້ານ ແລະ ບ້ານ ແຈ້ງໃຫ້ປະຊາຊົນພາຍໃນບ້ານຂອງຕົນຮັບຊາບ, ບໍ່ອະນຸຍາດໃຫ້ປຸກສ້າງເຮືອນ, ຮ້ານ ແລະ ປູກຕົ້ນໄມ້ໃຫຍ່ໃສ່ກ້ອງ ຫຼື ໃກ້ແລວສາຍສົ່ງໄຟຟ້າແຮງສູງ, ຖ້າບຸກຄົນໃດຫາກລະເມີດແມ່ນມອບໃຫ້ບຸກຄົນນັ້ນຮັບຜິດຊອບຜົນເສຍຫາຍທັງໝົດ ແລະ ບໍ່ມີການຊົດເຊີຍແຕ່ຢ່າງໃດ.

3. ໃຫ້ພະແນກຄຸ້ມຄອງລະບົບສາຍສົ່ງປະຈຳແຂວງ, ສະຖານີ ຫຼື ເຈົ້າໜ້າທີ່ໄຟຟ້າໃນຂົງເຂດພະລັງງານ ແລະບໍ່ແຮ່ ສົມທົບກັບບ້ານ ລົງຕິດຕາມ, ກວດກາສາຍສົ່ງໄຟຟ້າແຮງສູງ ຖ້າຫາກມີສິ່ງປຸກສ້າງທີ່ຂັດຕໍ່ມາດຖານເຕັກນິກໄຟຟ້າຂອງ ສປປ ລາວ ແມ່ນສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ລະດົມຍົກຍ້າຍອອກຈາກແລວສາຍສົ່ງໄຟຟ້າແຮງສູງ ເພື່ອຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນ ພ້ອມທັງສະດວກໃນການຄຸ້ມຄອງບຳລຸງຮັກສາແລວສາຍສົ່ງໄຟຟ້າ.

4. ຫ້າມ ບັນດາຮ້ານເກັບຊື້-ຂາຍເຫຼັກເສດ, ບໍລິສັດຕິດຕັ້ງໄຟຟ້າເອກະຊົນ, ໂຮງຈັກ, ໂຮງງານ, ຮັບຊື້ອຸປະກອນໄຟຟ້າຈາກກຸ່ມຄົນບໍ່ດີ ທີ່ລັກລອບເອົາໄປຂາຍຢ່າງເດັດຂາດ, ຖ້າຫາກເຈົ້າໜ້າທີ່ພົບເຫັນຈະຖືກປັບໃໝ ແລະ ກັກຕົວມາດຳເນີນຄະດີຕາມລະບຽບກົດໝາຍ.

5. ຖ້າຫາກບຸກຄົນໃດ ຫາກພົບເຫັນການລັກລອບຊື້-ຂາຍ, ຄອບຄອງ ໃຫ້ລາຍງານຂໍ້ມູນ ໃຫ້ຄະນະກຳມະການເພື່ອຄຸ້ມຄອງ, ກວດກາ, ແກ້ໄຂສະພາບສາຍສົ່ງໄຟຟ້າແຮງສູງຂັ້ນແຂວງ ແລະ ຂັ້ນເມືອງ ຈະໄດ້ຮັບຜົນຕອບແທນດັ່ງນີ້:

| | | |
|---|---|---|
| - ຜູ້ລາຍງານໃຫ້ຂໍ້ມູນ | ຈະໄດ້ຮັບ | 30% ຂອງມູນຄ່າປັບໃໝ |
| - ຜູ້ຈັດຕັ້ງປະຕິບັດ (ຜູ້ຈັບຕົວໄດ້) | ຈະໄດ້ຮັບ | 40% ຂອງມູນຄ່າປັບໃໝ |
| - ຜູ້ໄກ່ເກ່ຍ (ແກ້ໄຂ) | ຈະໄດ້ຮັບ | 20% ຂອງມູນຄ່າປັບໃໝ |
| - ຄ່າບູລະນະ | ຈະໄດ້ຮັບ | 10% ຂອງມູນຄ່າປັບໃໝ. |

6. ໃຫ້ພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າ, ລັດວິສາຫະກິດ, ບໍລິສັດ, ໂຮງຈັກ, ໂຮງງານ, ຫ້າງຮ້ານ, ບັນດາເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນແຂວງຫຼວງນ້ຳທາ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

7. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ ເປັນຕົ້ນໄປ.

ເຈົ້າແຂວງຫຼວງນ້ຳທາ

ເພັດຖາວອນ ພິລະວັນ